**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ແຂວງບໍລິຄຳໄຊ

ໂຮງຮຽນການເມືອງ ແລະ ການປົກຄອງແຂວງ

ເລກທີ 269 /ຮມປຂ

ບໍລິຄຳໄຊ, ວັນທີ..໑໐.ສ/໐໗.໒໐໒໖

## ໜັງສືແຈ້ງເຊີນປະມູນເປີດກວ້າງ

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນ ຂອງລັດ ສະບັບ, ເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນ ຂອງລັດ ສະບັບ, ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
- ອີງຕາມ: ແຈ້ງການ ຂອງຫ້ອງວ່າການແຂວງ ເລກທີ 887/ຂບຊ, ລົງວັນທີ 08 ມິຖຸນາ 2026 ກ່ຽວກັບການຈັດຕັ້ງໂຄງການສ້ອມແປງຫໍພັກນັກສຶກສາ ແລະ ໂຄງການກໍ່ສ້າງ, ປັບປຸງຕາຂ່າຍໄຟຟ້າ 22 ກວ, 0,4 ກວ ແລະຕິດຕັ້ງໝໍ້ແປງ 250 ກວອ ໂຮງຮຽນການເມືອງ ແລະ ການປົກຄອງແຂວງ ຫຼັງໃໝ່.

ໂຮງຮຽນການເມືອງ ແລະ ການປົກຄອງແຂວງບໍລິຄຳໄຊ ຂໍເຊີນບັນດາບໍລິສັດ, ຜູ້ປະກອບການ ຮ່ວມຍື່ນຊອງປະມູນແບບເປີດກ້ວາງ ສຳລັບໂຄງການສ້ອມແປງຫໍພັກນັກສຶກສາ ແລະກໍ່ສ້າງຕາຄ່າຍໄຟຟ້າ ແລະ ຕິດຕັ້ງໝໍ້ແປງ ເຂົ້າໂຮງຮຽນການເມືອງ ແລະ ການປົກຄອງແຂວງ (ຫຼັງໃໝ່) ຕັ້ງຢູ່ບ້ານໂພນສະອາດ, ເມືອງປາກຊັນແຂວງບໍລິຄຳໄຊ, ການປະມູນດັ່ງກ່າວ ຈະໄດ້ດຳເນີນໄປຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນ ຂອງລັດ ສະບັບ, ເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນ ຂອງລັດ ສະບັບ, ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ມີຄວາມສົນໃຈສາມາດມາຕິດຕໍ່ພົວພັນ ແລະ ຊື້ຊອງປະມູນໄດ້ທີ່ໂຮງຮຽນການເມືອງ ແລະ ການປົກຄອງແຂວງ ໂທ: 020 56274 507 ແລະ ພະແນກການເງິນແຂວງ ໂທ: 020 28870 055 ໃນໂມງລັດຖະການເລີ່ມແຕ່ວັນທີ 09 ກໍລະກົດ 2026 ຫາ 20 ສິງຫາ 2026,ໃນລາຄາ 1.000.000 ກີບ (ໜຶ່ງລ້ານກີບຖ້ວນ)/ຊອງ ເງິນຈຳນວນດັ່ງກ່າວຈະບໍ່ມີການສົ່ງຄືນ, ຊຳລະເປັນເງິນສົດ. ຊອງປະມູນຕ້ອງສົ່ງກ່ອນເວລາ 8:30 ໂມງ ຂອງວັນທີ 20 ສິງຫາ 2026 ທີ່ໂຮງຮຽນການເມືອງ ແລະ ການປົກຄອງແຂວງບໍລິຄຳໄຊ ແລະ ການເປີດຊອງປະມູນແມ່ນເລີ່ມຕົ້ນເວລາ 8:30 ໂມງ ຂອງວັນດຽວກັນ ໂດຍຊອງໜ້າຄະນະກຳມະການປະມູນ ແລະ ຕົວແທນ ຂອງຜູ້ເຂົ້າຮ່ວມການແຂ່ງຂັນປະມູນ ທີ່ຫ້ອງປະຊຸມໂຮງຮຽນການເມືອງ ແລະ ການປົກຄອງແຂວງ. ທຸກຊອງປະມູນຕ້ອງໄດ້ປະກອບມີການຄ້ຳປະກັນການປະມູນດ້ວຍເງິນສົດ, ແຊັກ (ວີຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານບໍ່ໃຫ້ຫຼຸດ 2% ຂອງມູນຄ່າປະມູນມາພ້ອມ.

ຫົວໜ້າໂຮງຮຽນ

ການເມືອງ ແລະ ການປົກຄອງແຂວງບໍລິຄຳໄຊ

ຈັງ[illegible] ຈັງເຕັ້ງ


ພົວພັນ: 020 56274 507 ນ. ແສງມະນີ ແກ້ວວົງວິຈິດ

020 28870 055 ທ. ຄຳປະເສີດ ພົມມະວົງ